ສາລະບານ


ມະຕິຕົກລົງ ..... 3

ລັດຖະດຳລັດ ..... 4

ກົດໝາຍ ວ່າດ້ວຍ ທາງຫລວງ ..... 5

  ພາກທີ I ບົດບັນຍັດທົ່ວໄປ ..... 5

    ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍທາງຫລວງ ..... 5

    ມາດຕາ 2. ຄວາມໝາຍຂອງທາງ ..... 5

    ມາດຕາ 3. ການສົ່ງເສີມການພັດທະນາທາງຫລວງ ..... 6

    ມາດຕາ 4. ພັນທະຂອງຜູ້ນຳໃຊ້ທາງຫລວງ ..... 6

  ພາກທີ II ທາງຫລວງແລະການດຳເນີນກິດຈະການທາງຫລວງ ..... 6

   ໝວດທີ 1 ທາງຫລວງ ..... 6

    ມາດຕາ 5. ທາງຫລວງ ..... 6

    ມາດຕາ 6. ທາງຫລວງແຫ່ງຊາດ ..... 7

    ມາດຕາ 7. ທາງຫລວງແຂວງ, ກຳແພງນະຄອນ ແລະເຂດພິເສດ ..... 7

    ມາດຕາ 8. ທາງຫລວງເມືອງ ..... 7

    ມາດຕາ 9. ທາງເທດສະບານ ..... 7

    ມາດຕາ 10. ທາງຊົນນະບົດ ..... 7

    ມາດຕາ 11. ທາງສະເພາະ ..... 8

   ໝວດທີ 2 ກິດຈະການທາງຫລວງ ..... 8

    ມາດຕາ 12. ກິດຈະການທາງຫລວງ ..... 8

    ມາດຕາ 13. ການວາງແຜນທາງຫລວງ ..... 8

    ມາດຕາ 14. ການສຳຫລວດ ແລະ ການອອກແບບ ທາງຫລວງ ..... 8

    ມາດຕາ 15. ການກໍ່ສ້າງທາງຫລວງ ..... 8

    ມາດຕາ 16. ການປົກປັກຮັກສາ ແລະ ການສ້ອມແປງທາງຫລວງ ..... 8

  ພາກທີ III ການຄຸ້ມຄອງ, ການນຳໃຊ້ທີ່ດິນ ແລະ ຂອບເຂດທາງຫລວງ ..... 9

   ໝວດທີ 1 ການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນເພື່ອກິດຈະການທາງຫລວງ ..... 9

    ມາດຕາ 17. ການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນທາງຫລວງ ..... 9

    ມາດຕາ18. ແຫລ່ງວັດສະດຸເພື່ອກິດຈະການທາງຫລວງ ..... 9

    ມາດຕາ 19. ການທົດແທນຄືນທີ່ດິນເພື່ອກິດຈະການທາງຫລວງ ..... 9

   ໝວດທີ 2 ຂອບເຂດຂອງທາງຫລວງ ..... 9

    ມາດຕາ 20. ຂອບເຂດຂອງທາງຫລວງ ..... 9

    ມາດຕາ 21. ຂອບເຂດສະຫງວນຂອງທາງຫລວງ ..... 10

    ມາດຕາ 22. ເຂດປອດໄພຂອງທາງຫລວງ ..... 10

  ພາກທີ IV ຄ່າທຳນຽມ ແລະ ຄ່າບໍລິການທາງຫລວງ ..... 10

ມາດຕາ 23. ຄ່າທຳນຽມ ແລະ ຄ່າບໍລິການທາງຫລວງ ........................................................10
ມາດຕາ 24. ການເກັບຄ່າທຳນຽມ ແລະ ຄ່າບໍລິການ ທາງຫລວງ ..........................................10
ພາກທີ V ການສ້າງຕັ້ງ ວິສາຫະກິດກໍ່ສ້າງ, ວິສາຫະກິດທີ່ປຶກສາ ແລະ ສະມາຄົມວິສະວະກຳທາງຫລວງ10
ໝວດທີ 1 ການສ້າງຕັ້ງວິສາຫະກິດກໍ່ສ້າງ ແລະ ວິສາຫະກິດທີ່ປຶກສາທາງຫລວງ ..........................10
ມາດຕາ 25. ການສ້າງຕັ້ງ ວິສາຫະກິດກໍ່ສ້າງທາງຫລວງ ..................................................10
ມາດຕາ 26. ວິສາຫະກິດທີ່ປຶກສາທາງຫລວງ ...........................................................11
ມາດຕາ 27. ສະມາຄົມວິສະວະກຳທາງຫລວງ ...........................................................11
ໝວດທີ 2 ການສ້າງຕັ້ງ, ການຂຶ້ນທະບຽນ ແລະ ຫລັກການດຳເນີນວິສາຫະກິດທາງຫລວງ ............11
ມາດຕາ 28. ການສ້າງຕັ້ງ ແລະ ການຂຶ້ນທະບຽນວິສາຫະກິດ ...........................................11
ມາດຕາ 29. ຫລັກການດຳເນີນກິດຈະການທາງຫລວງ ......................................................12
ພາກທີ VI ອົງການຄຸ້ມຄອງ ແລະ ການກວດກາກິດຈະການທາງຫລວງ .......................................12
ໝວດທີ 1 ອົງການຄຸ້ມຄອງທາງຫລວງ ........................................................................12
ມາດຕາ 30. ອົງການຄຸ້ມຄອງທາງຫລວງ .....................................................................12
ມາດຕາ 31. ສິດ ແລະ ໜ້າທີ່ຂອງ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ .............12
ມາດຕາ 32. ສິດ ແລະ ໜ້າທີ່ຂອງພະແນກຄົມມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງປະຈຳແຂວງ, ກຳແພງນະຄອນ ແລະເຂດພິເສດ ...........................................................................13
ມາດຕາ 33. ສິດ ແລະ ໜ້າທີ່ຂອງຫ້ອງການ ຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ປະຈຳເມືອງ ຫລື ເທດສະບານ ...............................................................................................13
ມາດຕາ 34. ສິດ ແລະ ໜ້າທີ່ ຂອງອຳນາດການປົກຄອງບ້ານ .............................................13
ໝວດທີ 2 ການກວດກາກິດຈະການທາງຫລວງ ...............................................................14
ມາດຕາ 35. ການກວດກາກິດຈະການທາງຫລວງ ............................................................14
ມາດຕາ 36. ອົງການກວດກາທາງຫລວງ .....................................................................14
ມາດຕາ 37. ເນື້ອໃນກວດກາ ................................................................................14
ມາດຕາ 38. ຮູບການກວດກາ ................................................................................14
ພາກທີ VII ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ ........................................15
ມາດຕາ 39. ນະໂຍບາຍຕໍ່ຜູ້ມີຜົນງານ ......................................................................15
ມາດຕາ 40. ມາດຕະການຕໍ່ຜູ້ລະເມີດ .......................................................................15
ມາດຕາ 41. ມາດຕະການສຶກສາອົບຮົມ ....................................................................15
ມາດຕາ 42. ມາດຕະການປັບໃໝ ..............................................................................15
ມາດຕາ 43. ມາດຕະການທາງອາຍາ .........................................................................15
ມາດຕາ 44. ມາດຕະການໂທດເພີ່ມ ...........................................................................16
ພາກທີ VIII ບົດບັນຍັດສຸດທ້າຍ .............................................................................16
ມາດຕາ 45. ການຈັດຕັ້ງປະຕິບັດ ............................................................................16
ມາດຕາ 46. ຜົນສັກສິດ .......................................................................................16

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ　　　　　　　　　　　　　　　　　　　　ເລກທີ 04-99/ສພຊ

# ມະຕິຕົກລົງ

## ຂອງສະພາແຫ່ງຊາດແຫ່ງ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍທາງຫລວງ

---

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມການສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ 09/ນຍ, ລົງວັນທີ 16/3/1999;

ພາຍຫລັງທີ່ໄດ້ຄົ້ນຄ້ວາພິຈາລະນາຢ່າງກ້ວາງຂວາງ ແລະ ເລິກເຊິ່ງກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ທາງຫລວງ ໃນກອງປະຊຸມເທື່ອທີ່ 3 ສະໄໝສາມັນຂອງສະພາແຫ່ງຊາດ ຊຸດທີ IV, ໃນວາລະປະຊຸມຕອນບ່າຍຂອງວັນທີ 3 ເມສາ 1999.

### ກອງປະຊຸມໄດ້ຕົກລົງ:

<u>**ມາດຕາ 1**</u>: ຮັບຮອງເອົາກົດໝາຍວ່າດ້ວຍ ທາງຫລວງ ດ້ວຍຄະແນນສຽງຢ່າງເປັນເອກະສັນ.

<u>**ມາດຕາ 2**</u>: ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ວຽງຈັນ, ວັນທີ 3 ເມສາ 1999

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ.

ເລກທີ 12 ສປປ.

# ລັດຖະດຳລັດ

**ຂອງປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ທາງຫລວງ.

---

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53, ຂໍ້ 1 ;
- ອີງຕາມມະຕິຕົກລົງຂອງກອງປະຊຸມເທື່ອທີ່ 3 ສະໄໝສາມັນ ຂອງສະພາແຫ່ງຊາດຊຸດທີ IV ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ທາງຫລວງ ສະບັບເລກທີ່ 04 -99 / ສພຊ ລົງວັນທີ່ 3 ເມສາ 1999;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ່ 06 / ຄປຈ ລົງວັນທີ່ 6 ເມສາ 1999.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

**ມາດຕາ 1**: ປະກາດໃຊ້ກົດໝາຍວ່າດ້ວຍ ທາງຫລວງ.

**ມາດຕາ 2**: ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 26 ເມສາ 1999.

ປະທານປະເທດແຫ່ງ ສປປລາວ.

ຄຳໄຕ ສີພັນດອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
------------------

ສະພາແຫ່ງຊາດ ເລກທີ 04/99/ສພຊ
ວັນທີ 3/4/1999

# ກົດໝາຍ ວ່າດ້ວຍ ທາງຫລວງ

## ພາກທີ I ບົດບັນຍັດທົ່ວໄປ

**ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍທາງຫລວງ**

ກົດຫມາຍວ່າດ້ວຍທາງຫລວງ ມີໜ້າທີ່ກຳນົດບັນດາຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການນຳໃຊ້, ການວາງແຜນ, ການສຳຫລວດ, ການອອກແບບ, ການກໍ່ສ້າງ ແລະການປົກປັກຮັກສາທາງຫລວງ ລວມທັງຄວາມປອດໄພ, ການປົກປັກຮັກສາສິ່ງແວດລ້ອມ, ຮັບປະກັນການຈະລາຈອນໃນທຸກລະດູການ ລະຫວ່າງແຂວງຕ່າງໆ, ລະຫວ່າງຕົວເມືອງກັບຊົນນະບົດເຂດຫ່າງໄກສອກຫລີກ ໃຫ້ມີຄວາມສະດວກ ປະກອບສ່ວນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສ້າງພື້ນຖານຮັບປະກັນໃຫ້ແກ່ການເຊື່ອມຕໍ່ທາງດ້ານເສດຖະກິດ ຂອງຊາດ ກັບບັນດາປະເທດໃນພາກພື້ນ.

**ມາດຕາ 2. ຄວາມໝາຍຂອງທາງ**

ທາງແມ່ນຂອບເຂດພື້ນທີ່ ຊຶ່ງໄດ້ກໍ່ສ້າງຂຶ້ນເພື່ອຮັບໃຊ້ແກ່ການຈະລາຈອນ ລວມມີ: ໂຄງປະກອບຂອງທາງ, ສິ່ງປະ ກອບຂອງທາງ ແລະຂອບເຂດສະຫງວນຂອງທາງ.

**ໂຄງປະກອບຂອງທາງ**

ໂຄງປະກອບຂອງທາງລວມມີ: ໂຄງສ້າງຂອງທາງ, ຕະລິ່ງທາງ, ທໍ່ລະບາຍນ້ຳ, ຮ່ອງ ລະບາຍນ້ຳ, ກຳແພງຕ້ານເຈື່ອນ, ຂົວ, ອຸໂມງ, ທ່າຫຼຽບເຮືອບັກ, ເຮືອບັກ, ສະຖານທີ່ຈອດລົດ ແລະ ໂຄງສ້າງອື່ນໆ ທີ່ສ້າງຂຶ້ນຢູ່ລຸ່ມແລະເທິງທາງ.

**ສິ່ງປະກອບຂອງທາງ**

ສິ່ງປະກອບຂອງທາງລວມມີ: ເຄື່ອງໝາຍຈະລາຈອນ, ລະບົບໄຟອຳນາດ, ລະບົບໄຟແສງ ສະຫວ່າງ ແລະອື່ນໆ.

**ຂອບເຂດສະຫງວນຂອງທາງ**

ຂອບເຂດສະຫງວນຂອງທາງ ແມ່ນຂອບເຂດພື້ນທີ່ສອງເບື້ອງຂອງທາງ ຊຶ່ງສະຫງວນໄວ້ ເພື່ອຂະຫຍາຍກິດຈະການຂອງທາງ ຫລື ກິດຈະການປ້ອງກັນຄວາມປອດໄພຂອງທາງ.

**ກິດຈະການປ້ອງກັນຄວາມປອດໄພຂອງທາງ**

ກິດຈະການປ້ອງກັນຄວາມປອດໄພຂອງທາງ ແມ່ນບັນດາກິດຈະການທີ່ສ້າງຂຶ້ນເພື່ອແນໃສ່ ປ້ອງກັນອັນຕະລາຍໃນການຈະລາຈອນ, ການເຊາະເຈື່ອນ, ມົນລະພິດຈາກຄ້ວນ,ສີ, ແສງ, ສຽງ ດ້ວຍການປູກຕົ້ນໄມ້, ກໍ່ຝາກຳແພງ ແລະອື່ນໆ.

## ມາດຕາ 3. ການສົ່ງເສີມການພັດທະນາທາງຫລວງ

ລັດມີນະໂຍບາຍສົ່ງເສີມທຸກພາກສ່ວນເສດຖະກິດທັງພາຍໃນແລະຕ່າງປະເທດລົງທຶນໃນ ການກໍ່ສ້າງ, ສ້ອມແປງ ແລະ ປົກປັກຮັກສາທາງຫລວງດ້ວຍການຫລຸດຜ່ອນ ຫລື ຍົກເວັ້ນພາສີອາ ກອນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນພາຍໃນ ແລະ ກົດໝາຍ ວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງຕ່າງປະເທດຢູ່ ສາທາລະນະລັດ ປະຊາທິປະ ໄຕປະຊາຊົນລາວ.

ເພື່ອຮັບປະກັນແກ່ການຈະລາຈອນໄດ້ທຸກລະດູການ ລັດອະນຸຍາດໃຫ້ສ້າງຕັ້ງກອງທຶນພັດ ທະນາທາງຫລວງຂຶ້ນ.

## ມາດຕາ 4. ພັນທະຂອງຜູ້ນຳໃຊ້ທາງຫລວງ

ບຸກຄົນ ແລະ ການຈັດຕັ້ງທີ່ນຳໃຊ້ທາງຫລວງລ້ວນແຕ່ມີພັນທະປະກອບສ່ວນເຂົ້າໃນການກໍ່ ສ້າງ, ການສ້ອມແປງ, ການປົກປັກຮັກສາທາງຫລວງລວມທັງຄວາມປອດໄພ, ຄວາມເປັນລະບຽບ ຮຽບຮ້ອຍໃນການຈະລາຈອນ, ຄວາມສະອາດ, ຄວາມສວຍງາມ ແລະ ສິ່ງແວດລ້ອມ.

ການນຳໃຊ້ທາງຫລວງ ໃຫ້ປະຕິບັດຕາມກົດຈະລາຈອນຢ່າງເຂັ້ມງວດເຊັ່ນ: ນ້ຳໜັກບັນທຸກ, ຄວາມໄວ ແລະອື່ນໆ.

### ພາກທີ II ທາງຫລວງແລະການດຳເນີນກິດຈະການທາງຫລວງ

### ໝວດທີ 1 ທາງຫລວງ

## ມາດຕາ 5. ທາງຫລວງ

ທາງຫລວງ ແມ່ນລະບົບເສັ້ນທາງທີ່ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ, ສ້າງຂຶ້ນ ເພື່ອ ສາທາລະນະປະໂຫຍດ ໃນການຈະລາຈອນ ພາຍໃນປະເທດ ແລະ ລະຫວ່າງປະເທດ.

ທາງຫລວງຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວແບ່ງອອກເປັນ 6 ປະເພດ ຄື:

1. ທາງຫລວງແຫ່ງຊາດ;

2.ທາງຫລວງແຂວງ, ກຳແພງນະຄອນ ແລະ ເຂດພິເສດ;

3. ທາງຫລວງເມືອງ;

4. ທາງເທດສະບານ;

5. ທາງຊົນນະບົດ;

6. ທາງສະເພາະ.

## ມາດຕາ 6. ທາງຫລວງແຫ່ງຊາດ

ທາງຫລວງແຫ່ງຊາດ ແມ່ນທາງຍຸດທະສາດ ທີ່ຮັບໃຊ້ເພື່ອຜົນປະໂຫຍດລວມຂອງຊາດ ແລະ ລະຫວ່າງຊາດ ຊຶ່ງປະກອບມີ:

1. ທາງແຕ່ນະຄອນຫລວງໄປຫາເທດສະບານຂອງແຂວງ ແລະເຂດພິເສດ;

2. ທາງໄປຫາຊາຍແດນທີ່ເຊື່ອມຕໍ່ລະຫວ່າງປະເທດ;

3. ທາງທີ່ມີຄວາມສຳຄັນດ້ານເສດຖະກິດ-ສັງຄົມ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

## ມາດຕາ 7. ທາງຫລວງແຂວງ, ກຳແພງນະຄອນ ແລະເຂດພິເສດ

ທາງຫລວງແຂວງ, ກຳແພງນະຄອນ ແລະ ເຂດພິເສດ ແມ່ນທາງທີ່ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ, ການເມືອງ, ວັດທະນະທຳ-ສັງຄົມ ແລະ ຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນລະດັບແຂວງ ຫລື ເຂດພິເສດ ຊຶ່ງປະກອບມີ:

1. ທາງ ລະຫວ່າງແຂວງ ຫາ ແຂວງ ຫລື ເຂດພິເສດ;

2. ທາງແຕ່ເທດສະບານແຂວງ ຫລື ເຂດພິເສດ ໄປຫາເທດສະບານເມືອງ, ໄປຫາທ່າເຮືອ, ໄປຫາແຫລ່ງທ່ອງທ່ຽວ ແລະ ສະຖານທີ່ປະຫວັດສາດທີ່ມີຄວາມສຳຄັນຂອງ ແຂວງ ຫລື ເຂດພິເສດ.

## ມາດຕາ 8. ທາງຫລວງເມືອງ

ທາງຫລວງເມືອງ ແມ່ນທາງທີ່ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ, ການເມືອງ, ວັດທະນະທຳ-ສັງຄົມ ແລະ ຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃນລະດັບເມືອງ ຊຶ່ງປະກອບມີ:

1. ທາງລະຫວ່າງເມືອງຫາເມືອງ;

2. ທາງແຕ່ເທດສະບານເມືອງໄປຫາບ້ານ, ໄປຫາທ່າເຮືອ, ໄປຫາແຫລ່ງທ່ອງທ່ຽວ, ສະຖານທີ່ປະຫວັດສາດ ທີ່ມີຄວາມສຳຄັນ ແລະ ເຂດເສດຖະກິດສະເພາະຂອງເມືອງ.

## ມາດຕາ 9. ທາງເທດສະບານ

ທາງເທດສະບານ ແມ່ນລະບົບເສັ້ນທາງທີ່ຮັບໃຊ້ການຈະລາຈອນ ຢູ່ໃນເທດສະບານ.

## ມາດຕາ 10. ທາງຊົນນະບົດ

ທາງຊົນນະບົດ ແມ່ນເສັ້ນທາງທີ່ເຊື່ອມຕໍ່ລະຫວ່າງບ້ານ ກັບບ້ານ ແລະ ບ້ານໄປຫາສະຖານທີ່ການຜະລິດ ແລະ ການບໍລິການຕ່າງໆຂອງບ້ານ.

### ມາດຕາ 11. ທາງສະເພາະ

ທາງສະເພາະ ແມ່ນເສັ້ນທາງຮັບໃຊ້ສະເພາະໃຫ້ແກ່ການຜະລິດ ແລະ ການບໍລິການຂອງຂະແໜງການ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ເຂດປ່າສະຫງວນ.

## ໝວດທີ 2 ກິດຈະການທາງຫລວງ

### ມາດຕາ 12. ກິດຈະການທາງຫລວງ

ກິດຈະການທາງຫລວງ ແມ່ນການດຳເນີນການຈັດຕັ້ງປະຕິບັດ ບັນດາວຽກງານກ່ຽວກັບທາງຫລວງຊຶ່ງປະກອບດ້ວຍ ການວາງແຜນ, ການສຳຫລວດ, ການອອກແບບ, ການກໍ່ສ້າງ, ການປົກປັກຮັກສາ, ການສ້ອມແປງ, ການກວດກາ ແລະ ການນຳໃຊ້ທາງຫລວງ.

### ມາດຕາ 13. ການວາງແຜນທາງຫລວງ

ການວາງແຜນທາງຫລວງ ແມ່ນການສຶກສາຄົ້ນຄ້ວາ, ເກັບກຳຂໍ້ມູນຕ່າງໆເພື່ອວາງ ແຜນພັດທະນາທາງຫລວງປະເພດຕ່າງໆຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງກົດໝາຍສະບັບນີ້.

### ມາດຕາ 14. ການສຳຫລວດ ແລະ ການອອກແບບ ທາງຫລວງ

ການສຳຫລວດ ແມ່ນການລົງເກັບກຳສະພາບແວດລ້ອມ ແລະ ຂໍ້ມູນລະອຽດເພື່ອສ້າງເປັນບົດວິພາກເສດຖະກິດ-ເຕັກນິກ ໂດຍມີການປະເມີນປະສິດທິຜົນເພື່ອກຽມໃຫ້ແກ່ການອອກແບບ.

ການອອກແບບທາງຫລວງ ແມ່ນການສ້າງແຜນຜັງລະອຽດ ຖືກຕ້ອງຕາມມາດຕະຖານເຕັກນິກບົນພື້ນຖານການວິໄຈຂໍ້ມູນທີ່ໄດ້ມາຈາກການສຳຫລວດຊຶ່ງປະກອບດ້ວຍ: ແຜນແຕ້ມ, ການປະເມີນມູນຄ່າ ແລະ ການກຳນົດເວລາໃນການກໍ່ສ້າງ.

### ມາດຕາ 15. ການກໍ່ສ້າງທາງຫລວງ

ການກໍ່ສ້າງທາງຫລວງ ແມ່ນການປະຕິບັດວຽກງານກໍ່ສ້າງທາງຫລວງປະເພດຕ່າງໆຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງກົດໝາຍສະບັບນີ້. ຜູ້ດຳເນີນກິດຈະການກໍ່ສ້າງທາງຫລວງຕ້ອງປະຕິບັດຕາມເອກະສານອອກແບບ, ຮັບປະກັນຄຸນນະພາບ, ຄວາມປອດໄພ ແລະ ຮັກສາສິ່ງແວດລ້ອມ.

### ມາດຕາ 16. ການປົກປັກຮັກສາ ແລະ ການສ້ອມແປງທາງຫລວງ

ການປົກປັກຮັກສາທາງຫລວງ ແມ່ນການຕິດຕາມກວດກາດູແລ ສະພາບການຕ່າງໆ ຂອງທາງຫລວງເພື່ອບົວລະບັດຮັກສາເປັນປົກກະຕິເຊັ່ນ: ຕັດຫຍ້າ, ອະນາໄມໜ້າທາງ, ຮ່ອງລະບາຍນ້ຳ, ທໍ່, ຂົວ ແລະ ສິ່ງປະກອບຕ່າງໆຂອງທາງ.

ການສ້ອມແປງທາງ ແມ່ນການບຳລຸງຮັກສາ, ປົວແປງທາງທີ່ເປ່ເພໃຫ້ຢູ່ໃນສະພາບປົກກະຕິ ຕາມການອອກແບບຊຶ່ງລວມມີ: ການສ້ອມແປງປົກກະຕິ, ການສ້ອມແປງຕາມກຳນົດ ແລະ ການສ້ອມແປງສຸກເສີນ.

## ພາກທີ III ການຄຸ້ມຄອງ, ການນຳໃຊ້ທີ່ດິນ ແລະ ຂອບເຂດທາງຫລວງ

### ໝວດທີ 1 ການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນເພື່ອກິດຈະການທາງຫລວງ

**ມາດຕາ 17. ການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນທາງຫລວງ**

ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ທີ່ດິນເພື່ອກິດຈະການທາງຫລວງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ.

**ມາດຕາ18. ແຫລ່ງວັດສະດຸເພື່ອກິດຈະການທາງຫລວງ**

ກະຊວງ ຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ແຫລ່ງວັດສະດຸເພື່ອກິດຈະການທາງຫລວງເຊັ່ນ: ດິນ, ຫີນ, ຫີນແຮ່, ຊາຍ ແລະ ວັດສະດຸກໍ່ສ້າງທາງຊະນິດອື່ນໆຕາມບ່ອນທີ່ໄດ້ສຳຫລວດ ແລະ ໄດ້ຮັບອະນຸຍາດຂຸດຄົ້ນຈາກລັດຖະບານ.

**ມາດຕາ 19. ການທົດແທນຄືນທີ່ດິນເພື່ອກິດຈະການທາງຫລວງ**

ໃນການກໍ່ສ້າງທາງຫລວງປະເພດຕ່າງໆ ຫາກມີຄວາມຈຳເປັນນຳໃຊ້ທີ່ດິນຂອງບຸກຄົນ ຫລື ການຈັດຕັ້ງທີ່ໄດ້ຮັບສິດນຳໃຊ້ຢ່າງຖືກຕ້ອງຕາມກົດໝາຍຕ້ອງໄດ້ຮັບການທົດແທນຄືນ ຕາມຄວາມເໝາະສົມ.

### ໝວດທີ 2 ຂອບເຂດຂອງທາງຫລວງ

**ມາດຕາ 20. ຂອບເຂດຂອງທາງຫລວງ**

ຂອບເຂດຂອງທາງຫລວງ ແມ່ນພື້ນທີ່ທາງທັງໝົດນັບທັງໜ້າທາງ, ບ່າທາງ, ທາງຄົນຍ່າງ, ຮ່ອງລະບາຍນ້ຳ, ຕະລິ່ງທາງ ແລະ ເຂດສະຫງວນຂອງທາງຫລວງ.

ລວງກ້ວາງຂອງຂອບເຂດທາງຫລວງແຕ່ລະປະເພດມີດັ່ງນີ້:

1. ທາງຫລວງແຫ່ງຊາດກ້ວາງເບື້ອງລະ 25 ແມັດ, ນັບແຕ່ໃຈກາງທາງອອກໄປ;
2. ທາງຫລວງແຂວງກ້ວາງເບື້ອງລະ 15 ແມັດ, ນັບແຕ່ໃຈກາງທາງອອກໄປ;
3. ທາງຫລວງເມືອງກ້ວາງເບື້ອງລະ 10 ແມັດ, ນັບແຕ່ໃຈກາງທາງອອກໄປ;
4. ທາງຊົນນະບົດກ້ວາງເບື້ອງລະ 5 ແມັດ, ນັບແຕ່ໃຈກາງທາງອອກໄປ;
5. ທາງເທດສະບານໃຫ້ປະຕິບັດຕາມແຜນຜັງເມືອງ;
6. ທາງສະເພາະໃຫ້ປະຕິບັດຕາມມາດຕະຖານເຕັກນິກສະເພາະຂອງແຕ່ລະເສັ້ນທາງ.

ສ່ວນມາດຕະຖານເຕັກນິກຂອງທາງແຕ່ລະປະເພດ ແມ່ນກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງ ເປັນຜູ້ກຳນົດ.

### ມາດຕາ 21. ຂອບເຂດສະຫງວນຂອງທາງຫລວງ

ໃນຂອບເຂດສະຫງວນຂອງທາງຫລວງຫ້າມປຸກສ້າງກິດຈະການຕ່າງໆ, ໃນກໍລະນີຈຳເປັນຕ້ອງ ປຸກສ້າງນັ້ນ ຕ້ອງໄດ້ຂໍອະນຸຍາດຈາກອົງການຄຸ້ມຄອງທາງຫລວງ.

### ມາດຕາ 22. ເຂດປອດໄພຂອງທາງຫລວງ

ເຂດປອດໄພຂອງທາງຫລວງ ແມ່ນເຂດທີ່ນອນຢູ່ໃນຂອບເຂດຂອງທາງຫລວງ ຊຶ່ງປະກອບດ້ວຍ: ບ່າທາງ, ທາງຄົນຍ່າງ, ໄລຍະແນມເຫັນຂອງຈຸດເປີດກ້ວາງທາງໂຄ້ງແລະຈຸດທາງຄົບ, ບໍລິເວນຫົວຂົວ, ຫົວທໍ່, ຕະລິ່ງທາງ, ກຳແພງຕ້ານເຈື່ອນ, ຮ່ອງລະບາຍນ້ຳ, ດອນກາງທາງ, ເຂດທາງມ້າລາຍ, ບ່ອນຈອດລົດເມ. ໃນເຂດປອດໄພຂອງທາງຫລວງ ຫ້າມດຳເນີນກິດຈະການ ແລະ ວາງສິ່ງກີດຂວາງຕ່າງໆ.

## ພາກທີ IV ຄ່າທຳນຽມ ແລະ ຄ່າບໍລິການທາງຫລວງ

### ມາດຕາ 23. ຄ່າທຳນຽມ ແລະ ຄ່າບໍລິການທາງຫລວງ

ຄ່າທຳນຽມ ແລະ ຄ່າບໍລິການທາງຫລວງ ແມ່ນລາຍຮັບທີ່ໄດ້ມາຈາກການດຳເນີນກິດຈະການແລະການນຳໃຊ້ທາງຫລວງເຊັ່ນ: ຄ່າຂຶ້ນທະບຽນ, ຄ່າລິຂະສິດ, ຄ່າຜ່ານທາງ, ຄ່າຂ້າມບັກ, ຄ່າຜ່ານຂົວ ແລະ ອື່ນໆ.

### ມາດຕາ 24. ການເກັບຄ່າທຳນຽມ ແລະ ຄ່າບໍລິການ ທາງຫລວງ

ກະຊວງການເງິນສົມທົບກັບ ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຜູ້ຄົ້ນຄ້ວາກ່ຽວກັບອັດຕາການເກັບຄ່າທຳນຽມ ແລະ ຄ່າບໍລິການທາງຫລວງ ເພື່ອສະເໜີລັດຖະບານຕົກລົງ.

## ພາກທີ V ການສ້າງຕັ້ງ ວິສາຫະກິດກໍ່ສ້າງ, ວິສາຫະກິດທີ່ປຶກສາ ແລະ ສະມາຄົມວິສະວະກຳທາງຫລວງ

## **ໝວດທີ 1 ການສ້າງຕັ້ງວິສາຫະກິດກໍ່ສ້າງ ແລະ ວິສາຫະກິດທີ່ປຶກສາທາງຫລວງ**

### ມາດຕາ 25. ການສ້າງຕັ້ງ ວິສາຫະກິດກໍ່ສ້າງທາງຫລວງ

ວິສາຫະກິດກໍ່ສ້າງທາງຫລວງ ແມ່ນຫົວໜ່ວຍທຸລະກິດທີ່ສ້າງຕັ້ງຂຶ້ນເພື່ອດຳເນີນກິດຈະການກໍ່ສ້າງແລະສ້ອມແປງທາງຫລວງ.

ບຸກຄົນ ຫລື ການຈັດຕັ້ງທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດກໍ່ສ້າງທາງຫລວງຕ້ອງມີ ເງື່ອນໄຂດັ່ງນີ້:

1. ຕ້ອງເປັນວິສະວະກອນ ຫລື ຕ້ອງມີນັກວິຊາການທີ່ມີຄວາມສາມາດດ້ານວິສະວະກຳກ່ຽວກັບກິດຈະການທາງ ຫລວງ ແລະ ມີປະສົບການຢ່າງໜ້ອຍ 3 ປີ;

2. ຕ້ອງມີທຶນ ຕາມລະບຽບການທີ່ໄດ້ກຳນົດໄວ້;

3. ຕ້ອງມີພາຫະນະກົນຈັກຢ່າງໜ້ອຍໜຶ່ງຊຸດ;

4. ຕ້ອງມີນາຍຊ່າງກໍ່ສ້າງທາງ ແລະ ນາຍຊ່າງກົນຈັກ.

### ມາດຕາ 26. ວິສາຫະກິດທີ່ປຶກສາທາງຫລວງ

ວິສາຫະກິດທີ່ປຶກສາທາງຫລວງ ແມ່ນຫົວໜ່ວຍທຸລະກິດທີ່ສ້າງຕັ້ງຂຶ້ນ ເພື່ອດຳເນີນກິດຈະການ ໃນການວາງແຜນ, ການສຳຫລວດ, ການອອກແບບ, ການຕິດຕາມ, ການກວດກາການກໍ່ສ້າງ ແລະໃຫ້ການປຶກສາແກ່ເຈົ້າຂອງໂຄງການກິດຈະການທາງຫລວງ.

ບຸກຄົນ ຫລື ການຈັດຕັ້ງທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດທີ່ປຶກສາທາງຫລວງຕ້ອງມີເງື່ອນໄຂດັ່ງນີ້:

1.ເປັນວິສະວະກອນຂົວທາງທີ່ຊຳນານງານ ແລະ ມີຄວາມສາມາດດ້ານວິສະວະກຳກ່ຽວກັບກິດຈະການ ທາງຫລວງ ແລະ ມີປະສົບການຢ່າງໜ້ອຍ 7 ປີ;

2. ມີນັກວິຊາການກ່ຽວຂ້ອງ ທີ່ມີປະສົບການຢ່າງໜ້ອຍ 5 ປີ;

3. ມີທຶນ ຕາມລະບຽບການທີ່ໄດ້ກຳນົດໄວ້;

4. ມີສຳນັກງານ, ອຸປະກອນ, ເຄື່ອງມື, ພາຫະນະຮັບໃຊ້ ຕາມລະບຽບການທີ່ໄດ້ກຳນົດໄວ້.

### ມາດຕາ 27. ສະມາຄົມວິສະວະກຳທາງຫລວງ

ເພື່ອເຮັດໃຫ້ການຄຸ້ມຄອງກິດຈະການທາງຫລວງມີປະສິດທິຜົນ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ລັດອະນຸຍາດໃຫ້ຈັດຕັ້ງສະມາຄົມວິສະວະກຳທາງຫລວງຂຶ້ນຕາມລະບຽບຂອງກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງວາງອອກ.

## ໝວດທີ 2 ການສ້າງຕັ້ງ, ການຂຶ້ນທະບຽນ ແລະ ຫລັກການດຳເນີນວິສາຫະກິດທາງຫລວງ

### ມາດຕາ 28. ການສ້າງຕັ້ງ ແລະ ການຂຶ້ນທະບຽນວິສາຫະກິດ

ການສ້າງຕັ້ງ, ການຂຶ້ນທະບຽນວິສາຫະກິດກໍ່ສ້າງ ແລະ ວິສາຫະກິດທີ່ປຶກສາທາງຫລວງຕ້ອງປະຕິບັດຕາມກົດໝາຍວ່າດ້ວຍທຸລະກິດ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ.

ສຳລັບການລົງທຶນຂອງຕ່າງປະເທດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງຕ່າງປະເທດ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ມາດຕາ 29. ຫລັກການດຳເນີນກິດຈະການທາງຫລວງ

ການດຳເນີນກິດຈະການທາງຫລວງ ຕ້ອງປະຕິບັດຕາມກົດໝາຍສະບັບນີ້ ແລະ ຕາມຫລັກການຕົ້ນຕໍຄື:

1. ຕ້ອງມີການຄັດເລືອກບໍລິສັດ;
2. ຕ້ອງມີການປະມູນ;
3. ຕ້ອງມີການສົມທຽບລາຄາ;
4. ຕ້ອງມີການມອບເໝົາ;
5. ຕ້ອງມີເຈົ້າຂອງໂຄງການ;
6. ຕ້ອງມີວິສາຫະກິດທີ່ປຶກສາ;
7. ຕ້ອງມີການກວດກາ;
8. ຕ້ອງມີການຮັບປະກັນຄຸນນະພາບການກໍ່ສ້າງ.

ໃນກໍລະນີທີ່ມີການຮັບເໝົາຕໍ່ຊ່ວງ ຕ້ອງໄດ້ຮັບການ ເຫັນດີຈາກເຈົ້າຂອງໂຄງການ.

# ພາກທີ VI ອົງການຄຸ້ມຄອງ ແລະ ການກວດກາກິດຈະການທາງຫລວງ

## ໝວດທີ 1 ອົງການຄຸ້ມຄອງທາງຫລວງ

## ມາດຕາ 30. ອົງການຄຸ້ມຄອງທາງຫລວງ

ອົງການຄຸ້ມຄອງທາງຫລວງປະກອບດ້ວຍ:

1. ກະຊວງ ກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ;
2. ພະແນກຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ;
3. ຫ້ອງການ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງປະຈຳເມືອງ ຫລື ເທດສະບານ;
4. ອຳນາດການປົກຄອງບ້ານ.

## ມາດຕາ 31. ສິດ ແລະ ໜ້າທີ່ຂອງ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ

ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ວາງແຜນຍຸດທະສາດ, ແຜນໄລຍະຍາວ, ແຜນໄລຍະກາງ ແລະ ແຜນໄລຍະສັ້ນ ກ່ຽວກັບການພັດທະນາຕາໜ່າງທາງຫລວງ;
2. ວາງລະບຽບໃນການຈັດຕັ້ງ, ການຄຸ້ມຄອງ, ການ ກວດກາ, ການວາງແຜນການ, ການສຳຫລວດ, ການອອກແບບ, ການກໍ່ສ້າງ, ການປົກປັກຮັກສາ, ການສ້ອມແປງ ແລະ ການນຳໃຊ້ທາງຫລວງໃນຂອບເຂດທົ່ວປະເທດ;
3. ວາງກຳນົດໝາຍມາດຕະຖານ-ເຕັກນິກ ຂອງທາງຫລວງປະເພດຕ່າງໆ;.

4. ຄົ້ນຄ້ວານະໂຍບາຍ ແລະ ອັດຕາຄ່າການກໍ່ສ້າງ, ການປົກປັກຮັກສາທາງຫລວງເພື່ອສະເໜີໃຫ້ລັດຖະບານພິຈາລະນາ;

5. ຄຸ້ມຄອງສະຖິຕິທາງຫລວງ;

6. ພົວພັນ ແລະ ຮ່ວມມືກັບສາກົນໃນການພັດທະນາລະບົບທາງຫລວງ;

7. ປະຕິບັດ ສິດ ແລະ ໜ້າທີ່ອື່ນໆກ່ຽວກັບກິດຈະການທາງຫລວງທີ່ລັດຖະບານມອບໃຫ້.

### ມາດຕາ 32. ສິດ ແລະ ໜ້າທີ່ຂອງພະແນກຄົມມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງປະຈຳແຂວງ, ກຳແພງນະຄອນ ແລະເຂດພິເສດ

ພະແນກຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດມີສິດ ແລະ ໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍແຜນຍຸດທະສາດ ແລະ ແຜນພັດທະນາຕາໜ່າງທາງຫລວງ ທີ່ຕົນຮັບຜິດຊອບ;

2. ອອກໃບອະນຸຍາດ, ຄຸ້ມຄອງວິສາຫະກິດກໍ່ສ້າງ ແລະ ວິສາຫະກິດທີ່ປຶກສາທາງຫລວງທີ່ປະຈຳຢູ່ແຂວງຂອງຕົນ;

3. ຄຸ້ມຄອງສະຖິຕິພ້ອມທັງລາຍງານສະພາບທາງຫລວງ ຢູ່ໃນຂອບເຂດທີ່ຕົນຮັບຜິດຊອບໃຫ້ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງຊາບຢ່າງເປັນປົກກະຕິ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບກິດຈະການທາງຫລວງທີ່ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງມອບໃຫ້.

### ມາດຕາ 33. ສິດ ແລະ ໜ້າທີ່ຂອງຫ້ອງການ ຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ປະຈຳເມືອງ ຫລື ເທດສະບານ

ຫ້ອງການຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງປະຈຳເມືອງ ຫລື ເທດສະບານມີສິດ ແລະ ໜ້າທີ່ດັ່ງນີ້:

1. ຊຸກຍູ້ຕິດຕາມວຽກງານການກໍ່ສ້າງ, ການປົກປັກຮັກສາ ແລະ ການສ້ອມແປງທາງຫລວງຢູ່ໃນຂອບເຂດທີ່ຕົນຮັບຜິດຊອບ;

2. ຄຸ້ມຄອງທາງຫລວງຢູ່ພາຍໃນຂອບເຂດເມືອງ ຫລື ເທດສະບານທີ່ຕົນຮັບຜິດຊອບ;

3. ຄຸ້ມຄອງສະຖິຕິພ້ອມທັງລາຍງານສະພາບທາງຫລວງ ຢູ່ໃນຂອບເຂດທີ່ຕົນຮັບຜິດຊອບໃຫ້ພະແນກຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດຊາບຢ່າງເປັນປົກກະຕິ;

4. ປະຕິບັດ ສິດ ແລະ ໜ້າທີ່ອື່ນໆທີ່ພະແນກຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດມອບໃຫ້.

### ມາດຕາ 34. ສິດ ແລະ ໜ້າທີ່ ຂອງອຳນາດການປົກຄອງບ້ານ

ອຳນາດການປົກຄອງບ້ານມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄຸ້ມຄອງພ້ອມທັງລາຍງານ ສະພາບທາງຫລວງຢູ່ໃນ ເຂດບ້ານທີ່ຕົນຮັບຜິດຊອບໃຫ້ຫ້ອງການຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງເມືອງ ຫລື ເທດສະບານຊາບຢ່າງເປັນປົກກະຕິ;

2. ປຸກລະດົມປະຊາຊົນປະກອບສ່ວນເຂົ້າໃນການກໍ່ສ້າງ, ການປົກປັກຮັກສາ ແລະ ການສ້ອມແປງທາງ ຫລວງໃນ ເຂດບ້ານທີ່ຕົນຮັບຜິດຊອບ;

3. ປະສານສົມທົບກັບບ້ານໃກ້ຄຽງແບ່ງຄວາມຮັບຜິດຊອບໃນການປົກປັກຮັກສາທາງຫລວງ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆທີ່ຫ້ອງການຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງປະຈໍາເມືອງຫລືເທດສະບານມອບໃຫ້.

## ໝວດທີ 2 ການກວດກາກິດຈະການທາງຫລວງ

### ມາດຕາ 35. ການກວດກາກິດຈະການທາງຫລວງ

ການກວດກາກິດຈະການທາງຫລວງ ແມ່ນການກວດກາຄວາມເປັນລະບຽບຮຽບຮ້ອຍ ໃນການຄຸ້ມຄອງ ແລະ ການນໍາໃຊ້ທາງຫລວງ, ກວດກາການຈັດຕັ້ງປະຕິບັດການກໍ່ສ້າງ, ການປົກປັກຮັກສາ, ການສ້ອມແປງ, ລະບົບເຕັກນິກ ແລະ ມູນຄ່າຂອງກິດຈະການທາງຫລວງ.

### ມາດຕາ 36. ອົງການກວດກາທາງຫລວງ

ອົງການກວດກາທາງຫລວງ ແມ່ນອົງການທີ່ມີໜ້າທີ່ກວດກາກິດຈະການທາງຫລວງຕາມທີ່ໄດ້ກໍານົດໄວ້ໃນມາດຕາ 35 ຂອງກົດໝາຍສະບັບນີ້.

ໃນການປະຕິບັດໜ້າທີ່ກວດກາດັ່ງກ່າວ ໃຫ້ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງຈັດຕັ້ງຄະນະກໍາມະການກວດກາທາງຫລວງຂຶ້ນ.

### ມາດຕາ 37. ເນື້ອໃນກວດກາ

ການກວດກາກິດຈະການທາງຫລວງມີເນື້ອໃນຕົ້ນຕໍດັ່ງນີ້:

1. ກວດກາ ການວາງແຜນ, ການສໍາຫລວດ, ການອອກແບບ ແລະການກໍ່ສ້າງ;

2. ກວດກາມາດຕະຖານ ການຮັບປະກັນຄວາມປອດໄພ ໃນການດໍາເນີນກິດຈະການທາງຫລວງ;

3. ກວດກາການປົກປັກຮັກສາສິ່ງແວດລ້ອມໃນການດໍາເນີນກິດຈະການທາງຫລວງ;

4. ກວດກາການປະຕິບັດມາດຕະຖານເຕັກນິກ ແລະການເງິນຂອງກິດຈະການທາງຫລວງ;

5. ກວດກາການປະມູນ, ສັນຍາ, ເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາກິດຈະການທາງຫລວງ;

6. ກວດກາການນໍາໃຊ້, ການປົກປັກຮັກສາ ແລະ ການ ສ້ອມແປງທາງຫລວງ.

### ມາດຕາ 38. ຮູບການກວດກາ

ການກວດກາກິດຈະການທາງຫລວງມີ 3 ຮູບການດັ່ງນີ້:

1. ການກວດກາຢ່າງເປັນລະບົບປົກກະຕິ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

## ພາກທີ VII ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 39. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງທີ່ເຂົ້າຮ່ວມການປະຕິບັດກິດຈະການທາງຫລວງຢ່າງມີປະສິດທິຜົນ, ມີຫົວຄິດປະດິດສ້າງ, ມີຄຸນນະພາບສູງ, ຮັບປະກັນຄວາມປອດໄພ ແລະ ປົກປັກຮັກສາສິ່ງແວດລ້ອມຂອງທາງຫລວງໄດ້ດີ, ຈະໄດ້ຮັບການຍ້ອງຍໍ ແລະນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

### ມາດຕາ 40. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງຫາກລະເມີດຂໍ້ບັນຍັດໃດໜຶ່ງຂອງກົດໝາຍສະບັບນີ້, ກໍ່ຄວາມເສັຍຫາຍ ໃຫ້ແກ່ສາທາລະນະ, ສິ່ງແວດລ້ອມ, ຊັບສິນ, ສຸຂະພາບ ຫລື ຊີວິດຂອງຜູ້ອື່ນ ຈະຖືກສຶກສາອົບຮົມ, ປັບໃໝ ຫຼື ຖືກລົງໂທດທາງອາຍາແລ້ວແຕ່ກໍລະນີໜັກ ຫລື ເບົາ ລວມທັງໃຊ້ຄ່າເສັຍຫາຍທີ່ຕົນກໍ່ຂຶ້ນ.

### ມາດຕາ 41. ມາດຕະການສຶກສາອົບຮົມ

ບຸກຄົນ ຫຼື ການຈັດຕັ້ງຫາກລະເມີດກົດໝາຍສະບັບນີ້ໃນສະຖານເບົາເຊັ່ນ: ການລະເມີດລະບຽບການດໍາເນີນກິດຈະການທາງຫລວງ, ການລະເມີດລະບຽບການ ປົກປັກຮັກສາ ແລະ ນໍາໃຊ້ທາງຫລວງ ຊຶ່ງສ້າງຄວາມເສັຍຫາຍໃຫ້ແກ່ຊັບສິນຂອງສາທາລະນະ ຫລື ຂອງບຸກຄົນ ທີ່ບໍ່ເປັນຜົນສະທ້ອນຢ່າງຮ້າຍແຮງຈະຖືກສຶກສາ ອົບຮົມ, ຕັກເຕືອນ ແລະ ໃຊ້ແທນຄ່າເສັຍຫາຍທີ່ຕົນກໍ່ຂຶ້ນ.

### ມາດຕາ 42. ມາດຕະການປັບໃໝ

ບຸກຄົນ ຫຼື ການຈັດຕັ້ງຫາກລະເມີດຂໍ້ບັນຍັດທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ເຊັ່ນ: ລະເມີດຫລັກການດໍາເນີນກິດຈະການທາງຫລວງ, ການປົກປັກຮັກສາ, ການສ້ອມແປງ, ການນໍາໃຊ້, ການຍົກຍ້າຍສິ່ງປະກອບຂອງທາງ, ກໍ່ຄວາມເສັຍຫາຍແກ່ໂຄງປະກອບ, ເຂດປອດໄພ ແລະ ເຂດສະຫງວນຂອງທາງຫລວງ; ລະເມີດລະບຽບການຂຶ້ນທະບຽນ ແລະ ດໍາເນີນທຸລະກິດ, ລະເມີດຫລັກການກໍ່ສ້າງ ຊຶ່ງກໍ່ຄວາມເສັຍຫາຍແກ່ຊັບສິນຂອງສາທາລະນະ ຫລື ຂອງບຸກຄົນຈະຖືກ ປັບໃໝ ແລະໃຊ້ແທນຄ່າເສັຍຫາຍທີ່ຕົນກໍ່ຂຶ້ນ.

### ມາດຕາ 43. ມາດຕະການທາງອາຍາ

ບຸກຄົນໃດຫາກລະເມີດຂໍ້ບັນຍັດທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ເຊັ່ນ: ລະເມີດຢ່າງຮ້າຍແຮງຕໍ່ຫລັກການດໍາເນີນກິດຈະການທາງຫລວງ, ການປົກປັກຮັກສາ, ການສ້ອມແປງ, ການນໍາໃຊ້; ທໍາລາຍສິ່ງປະກອບ, ໂຄງປະກອບ, ຂອບເຂດສະຫງວນ, ເຂດປອດໄພຂອງທາງຫລວງ; ປອມແປງ

ເອກະສານການຂຶ້ນທະບຽນແລະດຳເນີນທຸລະກິດ, ລະເມີດຫລັກການກໍ່ສ້າງ ຊຶ່ງກໍ່ຄວາມເສັຍຫາຍແກ່ສາທາລະນະ, ຊີວິດ, ສຸຂະພາບ ຫລື ຊັບສິນຂອງຜູ້ອື່ນ, ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຜົນປະໂຫຍດສ່ວນຕົວຈະຖືກດຳເນີນຄະດີທາງອາຍາ ແລະ ໃຊ້ແທນຄ່າເສັຍຫາຍທີ່ຕົນ ກໍ່ຂຶ້ນ.

### ມາດຕາ 44. ມາດຕະການໂທດເພີ່ມ

ນອກຈາກໂທດຕົ້ນຕໍທີ່ໄດ້ກຳນົດຢູ່ໃນມາດຕາ 42 ແລະ ມາດຕາ43 ຂອງກົດໝາຍສະບັບນີ້ ຜູ້ກະທຳຜິດຈະໄດ້ຮັບໂທດເພີ່ມຕື່ມອີກເຊັ່ນ: ຖືກງົດການດຳເນີນກິດຈະການ ຫລື ຖືກຖອນໃບອະນຸຍາດດຳເນີນທຸລະກິດ.

## ພາກທີ VIII ບົດບັນຍັດສຸດທ້າຍ

### ມາດຕາ 45. ການຈັດຕັ້ງປະຕິບັດ

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 46. ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫລັງ 90 ວັນ ນັບແຕ່ມື້ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ບັນດາຂໍ້ກຳນົດ ແລະ ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 3 ເມສາ 1999
ປະທານສະພາແຫ່ງຊາດ
ສະໝານ ວິຍະເກດ